# ໜ່ວຍຊາວໜຸ່ມ ທຄຕລ ສາຂາຄໍາມ່ວນ ເຂົ້າຮ່ວມເປີດບູ໊ດ ໃນພິທີປະກາດຮັບຮອງ ຄະນະບໍລິຫານງານຊາວໜຸ່ມ ປະຊາຊົນປະຕິວັດລາວ ແຂວງ ຄໍາມ່ວນ ເປັນ ຄຊປປລ 4 ບຸກ

ໃນວັນສຸກ ວັນທີ 02 ມີນາ 2018, ເວລາ 08:00-16:00ໂມງ ໜ່ວຍຊາວໜຸ່ມ ທຄຕລ ສາຂາ ຄໍາມ່ວນ ໄດ້ເຂົ້າຮ່ວມເປີດບູ໊ດໂຄສະນາສົ່ງເສີມການຊໍາລະຄ່າສິນຄ້າຜ່ານ BCEL OnePay ພ້ອມດ້ວຍໃຫ້ບໍລິການຮັບຊໍາລະຄ່າທໍານຽມທາງ ແລະ ລົງທະບຽນຜະລິດຕະພັນ BCEL ONE ໃນພິທີປະກາດຮັບຮອງ ຄະນະບໍລິຫານງານຊາວໜຸ່ມ ປະຊາຊົນ ປະຕິວັດລາວ ແຂວງ ຄໍາມ່ວນ ເປັນ ຄຊປປລ 4 ບຸກ.

ພາຍໃນງານໄດ້ມີການວາງສະແດງສິນຄ້າ ແລະ ຜະລິດຕະພັນຂອງບັນດາ 10 ຕົວເມືອງ. ບູ໊ດ ທຄຕລ ໄດ້ຮັບກຽດຢ່າງສູງຈາກຄະນະນໍາແຂວງຄໍາມ່ວນ ໃນການທົດລອງນໍາໃຊ້ BCEL OnePay ຊໍາລະຄ່າສິນຄ້າ ໂດຍ ທ່ານ ໂອໃດ ສຸດາພອນ ກໍາມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆ ຄໍາມ່ວນ, ພ້ອມດ້ວຍ ທ່ານ ອາລຸນໄຊ ສູນນະລາດ ກໍາມະການສໍາຮອງສູນກາງພັກ, ເລຂາຄະນະບໍລິຫານງານພັກ, ເລຂາຄະນະບໍລິຫານງານສູນກາງ ຊປປລ ແລະ ທ່ານ ປອ ແກ້ວອຸດອນ ບຸດສີງຂອນ ກໍາມະການພັກແຂວງ, ກໍາມະການສູນກາງຊາວໜຸ່ມ, ເລຂາຄະນະບໍລິຫານງານຊາວໜຸ່ມ ແຂວງ ຄໍາມ່ວນ, ພ້ອມນັ້ນກໍ່ໄດ້ຮັບຄວາມສົນໃຈລົງຖະບຽນ BCEL ONE ຢ່າງຫຼວງຫຼາຍ, ມີການນໍາໃຊ້ BCEL OnePay ຈ່າຍຄ່າສິນຄ້າພາຍໃນງານ, ພ້ອມທັງຊໍາລະຄ່າທໍານຽມທາງ ຈາກມວນຊົນທີ່ເຂົ້າຮ່ວມຢ່າງຟົດຟື້ນ.




ພາບ ... ຄ້າຜ່ານ One

ຂຽນຂ່າວ ແລະຖ່າຍພາບໂດຍ: ນ. ກອງຄໍາ ພົມມະສານ, ກວດແກ້ໂດຍ: ທ່ານ. ສົມບັດ ໄຊຍະສອນ











ຂຽນຂ່າວ ແລະຮູບພາບໂດຍ: ນ. ກອງຄຳ ພິມມະສານ,  ກວດແກ້ໂດຍ: ທ່ານ. ສົມບັດ ໄຊຍະສອນ